# ຢາກໃຫ້ໂລກນີ້ມີເຮົາສອງຄົນ

ໂດຍ:  ບ່າວຫຼັກເຈັດ

ຄົງສຸຂສົມ    ພິຣົມໃຈ    ໃນໂລກນີ້
ຖ້າຫາກມີ    ພຽງເຮົາສອງ    ຄອງຄູ່ກັນ
ຄົງໄຮ້ທຸກ    ຫາຍໂສກ    ເສົ້າຈາບັນ
ຄູ່ຄຽງກັນ    ສ້າງສວັນ    ເປັນຂອງເຮົາ

ຫາກໂລກນີ້    ມີເຮົາສອງ    ບໍ່ຫມອງຈິດ
ບໍ່ຄຸ່ນຄິດ    ຣິສຍາ    ພາອັບເສົາ
ບໍ່ຣະແວງ    ຄູ່ແຂ່ງອາດ    ຍາດຊິງເອົາ
ຂ້ອຍແລະເຈົ້າ    ເຂົ້າໃຈກັນ    ຝັນເລີດລອຍ

ຊື່ນສົດໃສ    ເມື່ອໃຈສອງ    ເຮົາຄົງຫມັ້ນ
ບໍ່ມີວັນ    ຈະຊົບເຊົາ    ເສົ້າເຫງົາຫງອຍ
ບໍ່ເກງກົວ    ອຸປສັກ    ຮັກເຕັມຮ້ອຍ
ຝັນລ່ອງລອຍ    ຄອງຄວາມສຸຂ    ທຸກແຫ່ງຫົນ

ຫາກຄວາມຝັນ    ກາຍເປັນຈິງ    ສິ່ງທີ່ຄິດ
ເນຣະມິດ    ໃຫ້ເຫຼືອພຽງ    ເຮົາສອງຄົນ
ບໍ່ມີຫືງ    ບໍ່ມີຫວງ    ຫ່ວງກັງວົນ
ເຮົາສອງຄົນ    ຄົງຊື້ນທຸກ    ສຸຂສົມປອງ

ແຕ່ຄວາມຈິງ ບໍ່ອີງຝັນ ຫວັ່ນມະນຸສ
ຕ່າງຍື້ຍຸດ ສຸດຈະແຍ້ງ ແຂ່ງກັນຄອງ
ເມື່ອມີຮັກ ມັກເອົ້າອຸກ ທຸກຫມົ່ນຫມອງ
ຄອຍປົກປ້ອງ ຕ້ອງຣະແວງ ເຂົາແຍ້ງໄປ

ເມື່ອມີຮັກ ຕ້ອງມີຫວງ ທວງຖາມທັກ
ຫວັ່ນຄົນຮັກ ມາຕິດລິ່ມ ຄາຣົມໃຈ
ມີແມວມອງ ຈ້ອງຂນາບ ຈະຄາບໄປ
ຈຶ່ງຫວັງໄວ້ ໃຫ້ໂລກນີ້ ມີເຮົາສອງຄົນ